Smallpox



# ໂຣຄ໌ "ສໂມນໂປກ" (ໄຂ້ທໍຣະພິດ)

## "ສໂມນໂປກ" ເປັນອັນຕຣາຍຢ່າງໃດ?

"ສະໂມນໂປກ" ຈະມີອາການຖືຄືງໄຂ້ແລະເປັນຜື່ນໄປທົ່ວຮ່າງກາຍ ແຕ່ກ່ອນເຄີຍເກີດເປັນບັນຫາສຸຂພາບໃຫ້ແກມວນມະນຸດຊາຕ. "ສະໂມນໂປກ" ເກີດມາຈາກເຊື້ອ "ວາຍເຣິສ" ທີ່ລະບາດຮ້າຍແຮງ ໃນຊ ່ວງນື່ງຂອງສັຕະວັດທີ່ໃຫ້ ຄົນລົ້ມຕາຍປະມານ ນຶ່ງໃນສາມ ຄົນທີ່ມີ ເຊື້ອໂຣຄ໌ນີ້.



*ສັກຢາວັກຊີນກັນໂຣກສະໂມນໂປກ*

ໃນປີ 1980 "ສະໂມນໂປກ" ຖືກກຳຈັດຢ່າງໄດ້ຜົນ ທີ່ບໍ່ເປັນໜ້າຫວ່ງ ໃຍຂອງຄົນອີກຕໍ່ໄປ. ທັງນີ້ກໍຍ້ອນການດຳເນີນງານຂອງອົງການ ອະນາມັຍໂລກ. ກໍຣະນີທີ່ມີເກີດຂື້ນໃຫ່ມຄັ້ງສຸດແມ່ນໃນປີ 1970. ເນື່ອງຈາກວ່າພວກສັດທັງຫລາຍບໍ່ຄືດວ່າມັນຈະເປັນ ຫລືຕິດ ເຊື້ອໂຣຄນີ້ ໄດ້ ສະນັ້ນຈື່ງເປັນອັນວ່າ ເປີເຊັນທີ່ຈະຕິດ ເຊື້ອໂຣຄ "ສະໂມນໂປກ" ຈະມີນ້ອຍທີ່ສຸດ.

ແຕ່ກໍໜ້າເສັຽດາຍທີ່ວ່າ "ສະໂມນໂປກ" ອາດຍັງບໍ່ຫາຍໄປຮອດຮ້ອຍ ເປີເຊັນ. ຕົວຢ່າງຂອງ "ໄວເຣິສ" ທີ່ພາໃຫ້ເກີດ "ສະໂມນໂປກ" ຫລາຍອັນ ກໍຍັງໄດ້ເອົາໄວ້ໄຊ້ຢູ່ຕາມຫ້ອງວິຈັຍຢູ່ ຫລັງຈາກ ພະຍາດນີ້ຖືກກຳຈັດ ໝົດແລ້ວມາ. ປັດຈຸບັນນີ້ຍັງມີຄວາມຄິດເປັນໄປໄດ້ຢູ່ວ່າ "ໄວເຣິສ" ນັ້ນອາດຈະຖືກເອົາມາທົດລອງສ້າງເພື່ອໄຊ້ເປັນອາວຸດໄດ້. ໂອກາດທີ່ຄົນ ຈະເຈຕນາຜະລິດເຊື້ອໂຣຄ "ສະໂມນໂປກ" ໃຫ້ະບາດຂື້ນ ໂດຍການປ່ອຍ ເຊື້ອ "ໄວເຣິສ" ອອກໄປນັ້ນຍັງຄິດວ່າເປັນໄປໄດ້ຢູ່. ຄວາມເປັນໄປໄດ້ ທີ່ວ່າຈະມີການໂຈມຕີແບບກໍ່ການລ້າຍ ໂດຍການໄຊ້ "ສະໂມນໂປກ" ນັ້ນຄິດວ່າຍັງມີເປີດເຊັນຕໍ່າຫລາຍ. ແຕ່ເມື່ອຄິດສລູບເຣື່ອງການ ໂຈມຕີແບບນັ້ນ ຖ້າຫານເກີດຂື້ນແທ້ ກໍ່ຈະເຄັ່ງຄັດສົມຄວນ.

## "ສໂມນໂປກ" ມີອາການຫຍັງແດ່?

ອາການຂອງ "ສະໂມນໂປກ" ເລີ່ມດ້ວຍການເປັນໄຂ້ຂື້ນສູງ, ເຈັບຫົວ ເຈັບຕາມຮ່າງກາຍ ແລະ ໃນບາງກໍຣະນີກໍຈະມີອາການຮາກອີກ. ຫລັງຈາກສອງຫາສີ່ວັນຕໍ່ມາກໍຈະເຫັນເປັນຜື່ນຄັນຕາມຜິວໜັງ. ຜື່ນຄັນຈະຂຍາຍຕົວແລະປ່ຽນເປັນກ້ອນໂພງໆມີເກັດ. ຫລັງຈາກ ນັ້ນປະມານສາມອາທິດຕໍ່ມາ ເກັດຈະຕົກແຫ້ງເຫລືອພຽງແຕ່ແຜເປັນບູ່ມ.

## ດົນປານໃດ "ສໂມນໂປກ" ຈື່ງຂຍາຍຕົວ? ເມື່ອໃດທ່ານຈື່ງແຜ່ລະບາດເຊື້ອໂຣກນີ້ໃສ່ຜູ້ອື່ນໄດ້ ?

ອາການທຳອິດຂອງ "ສໂມນໂປກ" ຕາມທຳມະດາ ຈະປະກົດເຫັນໃນ ຣະຫວ່າງ 12 ຫາ 14 ວັນ ຫລັງຈາກຄົນໄດ້ຕິດພະຍາດມາ. ແຕ່ບາງຄັ້ງ ມັນຈະເກີດຂື້ນໄວທີ່ສຸດກໍປະມານ ເຈັດວັນ ແລະຊ້າທີ່ສຸກກໍປະມານ 17 ວັນ. ຫລັງຈາກມີອາການຂັ້ນແຮກເກີດຂື້ນ, ຕາມປົກກະຕິ ຄົນປ່ວຍ ຈະເມື່ອຍຫລາຍ ຈົນບໍ່ສາມາດຈະໄປໃສໄດ້ ຫລື ເຮັດວຽກງານໃດໆໄດ້. ຜູ້ປ່ວຍຈະແຜ່ລະບາດເຊື້ອໂຣຄ໌ນີ້ຕິດຜູ້ອື່ນໄດ້ໃນເມື່ອເປັນຜື່ນຄັນອອກມາ.

## "ສໂມນໂປກ" ຕິດລະບາດໃສ່ຜູ້ອື່ນໄດ້ຫຼາຍພຽງໃດ?

"ສໂມນໂປກ" ຕິດລະບາດໃສ່ຜູ້ອື່ນໄດ້, ແຕ່ມັນຈະແຜ່ຂຍາຍຊ້າຫຼືຍາກ ກວ່າ ເຊື້ອໂຣຄອື່ນໆເຊັ່ນ ໂຣກໄຂ້ຫວັດໃຫຍ່ ຫລືໂຣກຫືດ. ຕາມປົກກະຕິ ແລ້ວພະຍາດນີ້ອາດຈະຕິດແຜ່ລະບາດໃສ່ຜູ້ທີ່ຮ່ວມນຳກັນຫຼືໃນເຮືອນຫຼັງ ດຽວກັນທີ່ດົນນານ. ເຊື້ອໂຣຄຍັງຈະແຜ່ລະບາດດ້ວຍການຕິດເຊື້ອຈາກ ນ້ຳຕ່າງໆຈາກພາກສ່ວນຂອງຮ່າງກາຍ ຫລືຕາມສິ່ງຂອງເຊັ່ນ ຜ້າປູບ່ອນ ແລະເຄື່ອງນຸ່ງຂອງຖື. ບາງຄັ້ງ ມັນຈະແຜ່ໄປຕາມອາກາດ ພາຍໃນ ອາຄານບ້ານເຮືອນ ຫລືຫ້ອງເປົ່າຫວ່າງທີ່ບໍ່ມີບ່ອນລະບາຍອາກາດ ແຕ່ເຣື່ອງການຂຍາຍແຜ່ລະບາດໃນແບບນີ້ຈະບໍ່ຄ່ອຍມີເລື້ອຍປານໃດ.

## ມີວິທີປິ່ນປົວ "ສໂມນໂປກ" ບໍ?

ທຸກວັນນີ້ຍັງບໍ່ທັນມີການປິ່ນປົວ "ສໂມນໂປກ" ທີ່ໄດ້ຜົນແນ່ນອນ. ແຕ່ວ່າ ພະຍາດນີ້ສາມາດປ້ອງກັນໄດ້ໂດຍການສັກຢາປ້ອງກັນ.

ຢາສັກນັ້ນຈະປ້ອງກັນຄົນໄດ້ ເຖິງແມ່ນວ່າໄດ້ຕິດເຊື້ອໂຣກ ມາແລ້ວ ກໍ່ຕາມ. ເຖິງແມ່ນວ່າ ບໍ່ມີ "ວັກຊີນ" ໃດໆຈະຊ່ວຍປ້ອງກັນໄດ້ຢ່າງສົມບູນ ຫລັງຈາກຕິດພະຍາດ "ສໂມນໂປກ" ມາແລ້ວ, ຢາທີ່ສັກພາຍໃນສາມມື້, ນັ້ນຈະຊ່ວຍປ້ອງກັນໄດ້ເທົ່າກັນກັບຢາທີ່ສັກກ່ອນ ທ່ານຕິດພະຍາດນັ້ນ. ສັກຢາພາຍໃນເຈັດມື້ຈະຊ່ວຍລຸດອາການປ່ວຍໄຂ້ ທຸກຢ່າງທີ່ມານຳ ການຕິດ "ສໂມນໂປກ".

ແຕ່ວ່າຢາທີ່ສັກປ້ອງກັນນັ້ນອາດຈະທຳໃຫ້ບາງຄົນມີອາການເລັກນ້ອຍ ແຕ່ບໍ່ເຖິງກັບເສັຍຊີວິດຍ້ອນ. ດັ່ງນັ້ນຜົນປະໂຍດຈາກການສັກຢາ "ວັກຊີນ" ເພື່ອປ້ອງກັນນັ້ນມີຄຸນກວ່າບໍ່ສັກ. ຈະມີສ່ວນນ້ອຍທີ່ສຸດທີ່ ຄົນຈະເປັນພິດພັຍຈາກການສັກຢາ ມີປະມານ ນຶ່ງຄົນໃນລ້ານ ຄົນ ຜູ້ທີ່ໄດ້ສັກຢາປ້ອງກັນນັ້ນຈະເສັຍຊີວິດຍ້ອນການສັກຢານີ້ ແລະ 15 ຄົນໃນລ້ານຄົນ ຈະເຈັບປ່ວຍໄຂ້ແຮງ. ແຕ່ວ່າຖ້າບໍ່ມີໃຜຈະຜະລິດພະຍາດ ນັ້ນມາເປັນອາວຸດ, ໂອກາດທີ່ຈະເຈັບປ່ວຍໄຂ້ຍ້ອນເຊື້ອ "ສໂມນໂປກ" ນັ້ນກໍ່ແມ່ນມີນ້ອຍທີ່ສຸດ.

Laotian

MINNESOTA MDH DEPARTMENT OF HEALTH
Communications Office
625 North Robert Street/Box 64957
St. Paul, MN 55164-0975
(651) 201-4989
www.health.state.mn.us